ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
========000========

ສະຫະກອນ ອອມຊັບ-ສິນເຊື່ອ ອທອ

ເລກທີ 062 /ສອສ.ອທອ

ນະຄອນຫລວງວຽງຈັນ,ວັນທີ 27/3/2020

# ແຈ້ງການ

ເຖິງ: ສະມາຊິກ ສະຫະກອນ ອອມຊັບ-ສິນເຊື່ອ ອທອ

ເລື່ອງ: ນະໂຍບາຍປ່ອຍກູ້ ກໍລະນີພິເສດ

- ອີງຕາມ ບົດບັນທຶກກອງປະຊຸມ ຂອງຄະນະອໍານວຍການ ສະຫະກອນ ອອມຊັບ-ສິນເຊື່ອ ອທອ ຄັ້ງວັນທີ 25 ກໍລະກົດ 2020;
- ອີງຕາມ ສະພາບຄວາມຈໍາເປັນອັນຮີບດ່ວນ ຂອງສະມາຊິກໃນການແກ້ໄຂຊີວິດການເປັນຢູ່ ແລະ ການຂະຫຍາຍທຸລະກິດ.

ສະຫະກອນ ອອມຊັບ-ສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງການຍັງມາບັນດາສະມາຊິກ ສະຫະກອນອອມຊັບ-ສິນເຊື່ອ ໃນຂອບເຂດທົ່ວປະເທດຊາບວ່າ ເພື່ອເຮັດໃຫ້ການແກ້ໄຂຄວາມຈໍາເປັນອັນຮີບດ່ວນຂອງບັນດາສະມາຊິກທີ່ຕ້ອງການກູ້ຢືມເງິນເພື່ອນໍາໄປໃຊ້ຈ່າຍພາຍໃນຄອບຄົວ,ການຂະຫຍາຍທຸລະກິດຄອບຄົວ ເນື່ອງຈາກວ່າໃນລະບຽບການຍັງບໍ່ທັນໄດ້ກໍານົດຫລັກການຢ່າງຊັດເຈນເທື່ອ ເຮັດໃຫ້ສະມາຊິກທີ່ຕ້ອງການກູ້ເງິນໃນວົງເງິນທີ່ສູງກວ່າລະບຽບການກໍານົດໄວ້ ບໍ່ສາມາດກູ້ຢືມໄດ້ ຫລື ຖ້າໄດ້ກໍ່ບໍ່ມີລະບຽບການຮອງຮັບທີ່ຊັດເຈນ, ສະນັ້ນ ຈຶ່ງໄດ້ສ້າງນິຕິກໍາຂຶ້ນໃໝ່ເພື່ອຮອງຮັບໃຫ້ແກ່ການກູ້ຢືມດັ່ງກ່າວ ດັ່ງລາຍລະອຽດລຸ່ມນີ້:

1.ການປ່ອຍກູ້ ກໍລະນີພິເສດ

- ວົງເງິນປ່ອຍກູ້ສູງສຸດ 100-300 ລ້ານກີບ
- ອັດຕາດອກເບ້ຍ 1,7%/ເດືອນ
- ໄລຍະເວລາສົ່ງຕົ້ນທຶນ ແລະ ດອກເບ້ຍ 24-36 ເດືອນ ສໍາລັບປະເພດທີ່ດິນ
- ໄລຍະເວລາສົ່ງຕົ້ນທຶນ ແລະ ດອກເບ້ຍ 12 ເດືອນ ສໍາລັບປະເພດພາຫະນະ (ລົດໃຫຍ່)
- ຫລັກຊັບຄໍ້າປະກັນ: ປະເພດທີ່ດິນ, ທະບຽນລົດ (ປະເພດລົດໃຫຍ່), ສໍາລັບຫລັກຊັບຄໍ້າປະກັນປະເພດທີ່ດິນແມ່ນໃຫ້ປະກອບເອກະສານໃນຮູບແບບໂອນລອຍ, ສ່ວນໃບທະບຽນພາຫະນະ ( ລົດໃຫຍ່) ແມ່ນໃຫ້ມອບໃບທະບຽນແທ້ໄວ້ກັບ ສອສ.
- ອັດຕາຄ່າປັບໄໝຕໍ່ເດືອນ 0,2% ຂອງມູນຄ່າທີ່ຍັງຄ້າງຊໍາລະ

2. ແຈ້ງການສະບັບນີ້ປ່ຽນແທນແຈ້ງການສະບັບເລກທີ 046/ສອສ.ອທອ, ລົງວັນທີ 20/3/2018 ສະເພາະຂໍ້ທີ 2 ເທົ່ານັ້ນ ສ່ວນເນື້ອໃນຕ່າງໆຂອງແຈ້ງການສະບັບດັ່ງກ່າວ ແມ່ນໃຫ້ປະຕິບັດຄືເກົ່າຈົນກວ່າຈະມີການປ່ຽນແປງ.

3. ແຈ້ງການສະບັບນີ້ ເລີ່ມນຳໃຊ້ນັບແຕ່ວັນທີ 1 ສິງຫາ 2020 ເປັນຕົ້ນໄປ.

ສະນັ້ນ, ຈິ່ງແຈ້ງການມາຍັງບັນດາສະມາຊິກ ສອສ ທຸກທ່ານເພື່ອຮັບຊາບ.

**ຜູ້ອຳນວຍການ ສະຫະກອນ ອອມຊັບ-ສິນເຊື່ອ ອທອ**

ບໍລິສັດ ອີທີແອລ ມະຫາຊົນ

ສະຫະກອນອອມຊັບ-ສິນເຊື່ອ

ອິດທະນາ ວົງເຫວັນ